2021. 09. 18

# SINGAPORE

## HISTORY OF REDEMPTION SEMINAR

### Lecture 1

HORA
The History of Redemption for All Nations

History of Redemption Seminar 1

ສຳມະນາປະຫວັດສາດການໄຖ່ 1

# Redemptive Administration of the Chronicler's Genealogies (1 Chr 6:49-53)

ແຜນການໄຖ່ໃນລຳດັບເຊື້ອສາຍຂອງພຣະຄຳຂ່າວຄາວ

**ລຳດັບເຊື້ອສາຍຂອງພຣະຄຳຂ່າວຄາວ ບັນທຶກໄວ້ໃນ 1 ຂ່າວຄາວ ບົດທີ 1-9**

**(1) ລຳດັບເຊື້ອສາຍຫຍໍ້ປະຫວັດສາດການໄຖ່ອອກມາເປັນຊື່ ປະມານ 1,159 ຊື່**

| ບົດທີ 1 | ບົດທີ 2 | ບົດທີ 3 | ບົດທີ 4 | ບົດທີ 5 | ບົດທີ 6 | ບົດທີ 7 | ບົດທີ 8 | ບົດທີ 9 | ລວມ |
|---|---|---|---|---|---|---|---|---|---|
| 191 | 161 | 89 | 148 | 60 | 119 | 140 | 128 | 123 | 1,159 ຄົນ |

**(2) ປະຫວັດສາດພຣະຄຳພີຫຍໍ້ເຫດການໄວ້ໃນຮູບແບບລຳດັບເຊື້ອສາຍໃນພຣະຄຳຂ່າວຄາວນີ້ຖືວ່າມີຄວາມຍາວຫຼາຍທີ່ສຸດ**

ນີ້ເປັນບັນທຶກປະຫວັດສາດອັນຍາວນານ ເປັນເວລາປະມານ 3,700 ປີ ນັບຈາກອາດາມ ຈົນເຖິງການກັບຈາກການເປັນຊະເລີຍໃນບາບີໂລນ

**1. ເນື້ອຫາຂອງແຕ່ລະບົດຂອງລຳດັບເຊື້ອສາຍໃນພຣະຄຳຂ່າວຄາວ**

| | |
|---|---|
| ບົດທີ 1 | ລຳດັບເຊື້ອສາຍຈາກອາດາມເຖິງຢາໂຄບ (ເອຊາວ) |
| ບົດທີ 2 | **ລຳດັບເຊື້ອສາຍບຸດຂອງຢູດາ** |
| ບົດທີ 3 | ລຳດັບເຊື້ອສາຍກະສັດແຫ່ງຢູດາບຸດຂອງດາວິດ |
| ບົດທີ 4 | **ເຜົ່າຢູດາ,** ເຜົ່າຊີເມໂອນ |
| ບົດທີ 5 | ເຜົ່າຣູເບັນ, ເຜົ່າກາດ, ມານາເຊເຄິ່ງເຜົ່າ (ຈາກຝັ່ງຕະເວັນອອກຂອງແມ່ນ້ຳຈໍແດນ) |
| ບົດທີ 6 | **ລຳດັບເຊື້ອສາຍຂອງເຜົ່າເລວີແລະປະໂລຫິດ**( 1 ຂ່າວຄາວ, 6:50-53; ລຳດັບເຊື້ອສາຍຂອງມະຫາປະໂລຫິດ |
| ບົດທີ 7 | ເຜົ່າອິດຊາຄາ, ເຜົ່າເບັນຢາມິນ, ເຜົ່າເນັບທາລີ, ມານາເຊເຄິ່ງເຜົ່າ, ເຜົ່າເອຟຣາອິມ, ເຜົ່າອາເຊ |
| ບົດທີ 8 | **ລຳດັບເຊື້ອສາຍເຜົ່າເບັນຢາມິນ** |
| ບົດທີ 9 | ຄົນທີ່ກັບຈາກການເປັນຊະເລີຍ, **ລຳດັບເຊື້ອສາຍຂອງປະໂລຫິດແລະເຜົ່າເລວີ** |

2. **ລັກສະນະຂອງລຳດັບເຊື້ອສາຍໃນພຣະຄຳຂ່າວຄາວ**

**(1) ການເນັ້ນເຜົ່າຢູດາແລະເບັນຢາມິນ**

ເຜົ່າຢູດາ (ບົດທີ 2, 4) ເຜົ່າເບັນຢາມິນ ( ບົດທີ 7, 8) ມີການບັນທຶກໄວ້ສອງເທື່ອ

**① ເປັນຫຍັງ?**

**ເມື່ອປະເທດແຍກອອກເປັນອານາຈັກຢູດາຊຶ່ງຢູ່ທາງໃຕ້ ກັບແລະອານາຈັກອິດສະຣາເອນທາງຕອນເໜືອພາຍຫຼັງການສິ້ນພຣະຊົນຂອງໂຊໂລໂມນ ທັງສອງເຜົ່າຢູ່ໃນອານາຈັກຢູດາທາງຕອນໃຕ້**

> **1 ກະສັດ 12:21** ເມື່ອກະສັດເຣໂຫໂບອາມໄດ້ມາຮອດນະຄອນເຢຣູຊາເລັມແລ້ວ ເພິ່ນກໍເອີ້ນເອົາທະຫານຜູ້ເກັ່ງກ້າຈາກເຜົ່າຢູດາ ແລະເບັນຢາມິນໜຶ່ງຮ້ອຍແປດສິບພັນຄົນ ເພິ່ນຕັ້ງໃຈຈະໄປເຮັດເສິກ ເພື່ອຍາດແຍ່ງເອົາເຜົ່າທາງເໜືອຂອງຊາດອິດສະຣາເອນ ໃຫ້ຄືນມາຢູ່ໃຕ້ອຳນາດຂອງຕົນ

**② ການຢູ່ໃນອານາຈັກຕອນໃຕ້ມີຄວາມໝາຍສຳຄັນຢ່າງໃດ?**

**ໝາຍຄວາມວ່າທັງສອງເຜົ່າຢຶດໝັ້ນໃນພັນທະສັນຍາຂອງພຣະເຈົ້າ**

ພັນທະສັນຍາຂອງດາວິດໃນ 2 ຊາມູເອນ 7:12-13 ກ່າວວ່າພຣະເມຊີອາຈະບັງເກີດມາໃນຖານະເຊື້ອສາຍຂອງດາວິດ

> **2 ຊາມູເອນ 7:12–13** ເມື່ອເຈົ້າຕາຍໄປ ແລະຖືກຝັງໄວ້ກັບບັນພະບູລຸດຂອງເຈົ້າແລ້ວ ເຮົາກໍຈະໃຫ້ລູກຊາຍຄົນໜຶ່ງຂອງເຈົ້າເປັນກະສັດ ແລະຈະໃຫ້ອານາຈັກຂອງລາວເຂັ້ມແຂງຂຶ້ນ, 13 ລາວຈະເປັນຜູ້ສ້າງວິຫານສຳລັບເຮົາ ແລະເຮົາຈະໃຫ້ເຊື້ອສາຍຂອງລາວປົກຄອງຕະຫຼອດໄປ

**③ ທຸກສິ່ງຈະຖືກຈັດເປັນລະບຽບແລະໝັ້ນຄົງໃຫ້ແກ່ຜູ້ທີ່ຢຶດໝັ້ນໃນພັນທະສັນຍາ**

> **2 ຊາມູເອນ 23:5** ພຣະເຈົ້າອວຍພອນໃຫ້ເຊື້ອສາຍຂອງຂ້າພະເຈົ້າດັ່ງນີ້ ເພາະຊົງຕັ້ງພັນທະສັນຍາກັບຂ້າພະເຈົ້າສືບໄປ.ເປັນຄຳຕົກລົງທີ່ຈະບໍ່ຖືກຍົກເລີກ ເປັນຄຳສັນຍາທີ່ຈະປ່ຽນແປງບໍ່ໄດ້ ທັງໝົດນີ້ ທີ່ຂ້າພະເຈົ້າຕ້ອງການ ຄືໃຫ້ຊົງມອບໄຊຊະນະໃຫ້ໃນທຸກໆສະພາບການ

**(2) ການເນັ້ນລຳດັບເຊື້ອສາຍຂອງເຜົ່າເລວີແລະປະໂລຫິດ**

ລຳດັບເຊື້ອສາຍຂອງເຜົ່າເລວີແລະປະໂລຫິດບັນທຶກໄວ້**ສອງເທື່ອໃນບົດທີ 6 ແລະ 9** ໂດຍສະເພາະຢ່າງຍິ່ງ 1 ຂ່າວຄາວ 6 ມີ 81 ຂໍ້ ແລະເປັນບົດທີຍາວທີ່ສຸດໃນບົດທີ 1 ເຖິງ 9 ແມ່ນຫຍັງຄືສາເຫດທີ່ບັນທຶກໄວ້ແບບນີ້?

**① ເຜົ່າເລວີ ໄດ້ຮັບການແຕ່ງຕັ້ງໃຫ້ເຮັດໜ້າທີ່ທັງໝົດໃນຫໍເຕັນຂອງພຣະເຈົ້າ**

> **1ຂ່າວຄາວ 6:48** ຝ່າຍພວກພີ່ນ້ອງຊາວເລວີຂອງພວກເຂົາກໍໄດ້ຖືກມອບໝາຍ ໃຫ້ຮັບໃຊ້ໜ້າທີ່ທັງໝົດ ໃນຫໍເຕັນສັກສິດ ແຫ່ງວິຫານຂອງພຣະເຈົ້າ

ເລື່ອງນີ້ຊີ້ໃຫ້ເຫັນເຖິງຄວາມສຳຄັນຂອງການຮັບໃຊ້ຄຣິສຕະຈັກຂອງພຣະເຈົ້າໃນປະຈຸບັນ

**ໂກໂລຊາຍ 1:24** ບັດນີ້ ເຮົາມີຄວາມຍິນດີໃນການທີ່ໄດ້ຮັບຄວາມທຸກເພື່ອເຈົ້າທັງຫລາຍ ສ່ວນການຊົງທົນທຸກຂອງພຣະຄຣິດທີ່ຍັງຂາດຢູ່ນັ້ນ ເຮົາກໍຮັບທົນຈົນສຳເຣັດໃນເນື້ອກາຍຂອງເຮົາ ເພາະເຫັນແກ່ພຣະກາຍຂອງພຣະອົງ ຄືຄຣິສຕະຈັກ

**② ປະໂລຫິດ ຖວາຍບູຊາເທິງແທ່ນເຜົາ ແລະເທິງແທ່ນເຄື່ອງຫອມ**

**1 ຂ່າວຄາວ 6:49** ແຕ່ອາໂຣນກັບບຸດຊາຍຂອງທ່ານຖວາຍເຄື່ອງບູຊາເທິງແທ່ນເຄື່ອງເຜົາບູຊາ ແລະເທິງແທ່ນເຄື່ອງຫອມ ແລະປະຕິບັດງານໃນບ່ອນສັກສິດທີ່ສຸດ ແລະກະທຳການລ້າງມົນທິນບາບຂອງ**ອິດສະຣາເອນ**ຕາມຢ່າງທີ່ໂມເຊຜູ້ຮັບໃຊ້ຂອງພຣະເຈົ້າໄດ້ບັນຊາໄວ້

ທຸກມື້ນີ້ ເຮົາເປັນປະໂລຫິດຂອງພຣະເຈົ້າ

**1 ເປໂຕ 2:9** ແຕ່ຝ່າຍທ່ານທັງຫຼາຍເປັນຊາດທີ່ພຣະເຈົ້າຊົງເລືອກໄວ້ແລ້ວ ເປັນປະໂລຫິດຫຼວງ ເປັນປະຊາຊາດບໍຣິສຸດ ເປັນພົນລະເມືອງຂອງພຣະເຈົ້າເອງ ເພື່ອທ່ານທັງຫຼາຍຈະໄດ້ປະກາດພຣະບາລະມີຂອງພຣະອົງ ຜູ້ໄດ້ຊົງເອີ້ນພວກທ່ານໃຫ້ອອກມາຈາກຄວາມມືດ ເຂົ້າໄປສູ່ຄວາມສະຫວ່າງອັນມະຫັດສະຈັນຂອງພຣະອົງ.

ເລື່ອງນີ້ຊີ້ໃຫ້ເຫັນເຖິງຄວາມສຳຄັນຂອງການນະມັດສະການແລະການອະທິຖານຂອງເຮົາຕໍ່ພຣະເຈົ້າ

ເຮົາບໍ່ສາມາດຮັບການຊຳລະໃຫ້ບໍຣິສຸດໄດ້ໂດຍປາສະຈາກພຣະຄຳພີແລະການອະທິຖານ

**1 ຕີໂມທຽວ 4:5** ເພາະວ່າສິ່ງເຫຼົ່ານັ້ນກໍຊົງຊຳຣະໄວ້ແລ້ວ ໂດຍພຣະທຳຂອງພຣະເຈົ້າ ແລະຄຳອາທິຖານ

(3) **ລຳດັບເຊື້ອສາຍນີ້ ເຊື່ອມໂຍງກັບລຳດັບເຊື້ອສາຍຂອງພຣະເຢຊູໃນມັດທາຍ 1**

(ນຳສະເໜີຢ່າງເປັນລະບົບເປັນເທື່ອທຳອິດໂດຍ ສຈ. ອັບຣາຮາມ ພາຣົກ)

ໜັງສືເຫຼັ້ມສຸດທ້າຍຂອງພຣະຄຳພີພາສາເຮັບເຣີ (ພັນທະສັນຍາເດີມ) ຄືພຣະຄຳຂ່າວຄາວ
ໜັງສືເຫຼັ້ມທຳອິດຂອງພັນທະສັນຍາໃໝ່ຄືພຣະຄຳມັດທາຍ
ພັນທະສັນຍາເດີມແລະພັນທະສັນຍາໃໝ່ເຊື່ອມໂຍງກັນຢ່າງໃດ
ຜ່ານທາງລຳດັບເຊື້ອສາຍ

## ໃຜຄື 13:1, ບຸກຄົນສຸດທ້າຍໄດ້ຊີ້ບອກວ່າເປັນທາຍາດຂອງເຊຣຸບາເບນໃນມັດທາຍ " ອາບີຮຸດ"

ຕາມບຸກຄົນສຸດທ້າຍທີ່ຢູ່ລາຍຊື່ລູກຫຼານຂອງເຊຣຸບາເບນຄືໂຮດາວີຢາ 1ຂ່າວຄາວ 3

| **1ຂ່າວຄາວ.3** | ເຊຣຸບບາເບນ (ຂໍ້19) | ຮານານີຢາ (ຂໍ້19) | ເຊການີຢາ (ຂໍ້21) | ເຊມັຍຢາ (ຂໍ້22) | ເນອາຣີຢາ (ຂໍ້23) | ເອລີໂອເອນັຍ (ຂໍ້24) | ໂຮດາວີຢາ (ຂໍ້24) |
|---|---|---|---|---|---|---|---|
| **ມັດທາຍ 1** | ເຊຣຸບບາເບນ | | | -------------------------> | | | ອາບີຮຸດ |

**ຈາກຂໍ້ມູນນີ້ ໂຮດາວີຢາ ກັບ ອາບີຮຸດເປັນບຸກຄົນດຽວກັນ**

ໂຮດາວີຢາ ຄື *Hodayvahu* (הֹדַיְוָהוּ), ເຊິ່ງແປວ່າ "ພຣະສິຣິຂອງພຣະຜູ້ເປັນເຈົ້າ (ພຣະບາຣະ)"
ອາບີຮຸດ ຄື *Abihud* (אֲבִיהוּד), ໃນພາສາເຮັບເຣີ ແປວ່າ "ພຣະສິຣິຂອງພຣະບິດາ (ພຣະບາຣະມີ)
"

ຕາມແຜນການໄຖ່ແລະປະຫວັດສາດການໄຖ່ຂອງພຣະເຈົ້າ ລຳດັບເຊື້ອສາຍຂອງມັດທາຍ ຍົກເວັ້ນໄວ້ 5 ຄົນລະຫວ່າງເຊຣຸບບາເບນ ແລະໂຮດາວີຢາ (ອາບີຮຸດ) ເພື່ອເຮັດໃຫ້ລຳດັບເຊື້ອສາຍມີແຕ່ 14ຊົ່ວອາຍຸຄົນ

3. ທັດສະນະເລື່ອງລູກຫົວປີໃນລຳດັບເຊື້ອສາຍຂອງພຣະຄຳຂ່າວຄາວ

**1 ຂ່າວຄາວ 5:1–2** ບຸດຣູເບນ ບຸດຊາຍກົກຂອງອິສຣາເອນ(ເຂົາເປັນບຸດຊາຍກົກກໍຈິງ ແຕ່ເພາະເຂົາໄດ້ກະທຳໃຫ້ທີ່ນອນຂອງບິດາຂອງເຂົາມີມົນທິນ ສິດທິບຸດຫົວປີຂອງເຂົາຈຶ່ງຕົກຢູ່ກັບບຸດໂຢເຊັບຜູ້ເປັນບຸດອິສຣາເອນ ແຕ່ໂຢເຊັບບໍ່ໄດ້ຂຶ້ນທະບຽນໄວ້ໃນສຳມະໂນຄົວເຊື້ອສາຍຕາມສິດທິບຸດຫົວປີ
2 ເຖິງແມ່ນວ່າຢູດາມີກຳລັງຫລາຍໃນພວກພີ່ນ້ອງຂອງຕົນ ແລະເຈົ້ານາຍອົງນຶ່ງກໍມາຈາກເຂົາ ແຕ່ສິດທິບຸດຫົວປີກໍຍັງເປັນຂອງໂຢເຊັບ)

**(1) ຣູເບັນເປັນລູກຫົວປີທາງກາຍຍະພາບ**

ແຕ່ເຂົາເສຍສິດລູກຫົວປີເພາະເຂົາເຮັດໃຫ້ຕຽງຂອງບິດາເປັນມົນທິນ(ປະຖົມມະການ4-3:49)

**ປະຖົມມະການ 35:22** ເມື່ອ **ອິດສະຣາເອນ**ໄດ້ອາໄສຢູ່ໃນປະເທດນັ້ນ ຣູເບັນໄດ້ລັກນອນນຳນາງ ບິນຮາ ເມຍນ້ອຍຂອງພໍ່ເມື່ອອິດສະຣາເອນຜູ້ເປັນພໍ່ຮູ້ເລື່ອງນີ້ ຝ່າຍບຸດຊາຍຂອງຢາໂຄບມີສິບສອງຄົນ

**(2)ໂຢເຊັບເປັນລູກຫົວປີທາງຝ່າຍວິນຍານ**

① ໃນບົດແຫ່ງຄວາມເຊື່ອ ເຮັບເຣີ 11 ນັ້ນໂຢເຊັບຖືກນັບວ່າເປັນທາຍາດແຫ່ງຄວາມເຊື່ອຕໍ່ຈາກຢາໂຄບ

**ເຮັບເຣີ 11:20–22**_ເພາະອີຊາກມີຄວາມເຊື່ອນີ້ ຈຶ່ງໄດ້ອວຍພອນຢາໂຄບແລະ ເອຊາວສຳລັບເຫດການທີ່ຈະເກີດຂຶ້ນໃນພາຍໜ້າ. 21 ເພາະຢາໂຄບມີຄວາມເຊື່ອນີ້ ເມື່ອໃກ້ຈະຕາຍຈຶ່ງໄດ້ອວຍພອນແກ່ລູກຊາຍຂອງໂຢເຊັບທຸກຄົນ ໝູບນະມັດສະການພຣະເຈົ້າເໜືອຫົວໄມ້ທ້າຂອງຕົນ 22 ເພາະໂຢເຊັບມີຄວາມເຊື່ອນີ້ ເມື່ອກຳລັງຈະໝົດຊີວິດຈຶ່ງໄດ້ກ່າວເຖິງເລື່ອງອິດສະຣາເອນຈະອອກໄປນັ້ນ ແລະໄດ້ສັ່ງໄວ້ເຖິງເລື່ອງກະດູກຂອງຕົນ.

② ໂຢເຊັບບໍ່ໄດ້ຖືກບັນທຶກໄວ້ໃນລຳດັບເຊື້ອສາຍຂອງປະຖົມມະການ

**ປະຖົມມະການ 48:5–6** ບັດນີ້ ລູກຊາຍສອງຄົນຂອງເຈົ້າ ເອຟຣາອິມແລະມານາເຊ ຊຶ່ງໄດ້ເກີດໃນປະເທດເອຢິບກ່ອນພໍ່ມາຢູ່ນີ້ຈະຕ້ອງເປັນຂອງພໍ່ຄືກັນກັບຣູເບັນແລະຊີເມໂອນ. 6 ແຕ່ວ່າລູກຂອງເຈົ້າທີ່ເກີດຫລັງພວກເຂົາທັງສອງຄົນນີ້ຈະເປັນຂອງເຈົ້າພວກເຂົາຈະໄດ້ຮັບມໍລະດົກສືບຕໍ່ຈາກອ້າຍຂອງພວກເຂົາ

ຈາກຊ່ວງນີ້ໂຢເຊັບບໍ່ໄດ້ຖືກບັນທຶກໄວ້ໃນລຳດັບເຊື້ອສາຍ ແຕ່**ລູກຊາຍທັງສອງຂອງເຂົາຄື ເອຟຣາອິມ ແລະມານາເຊຖືກນັບເປັນໜຶ່ງໃນອິດສະຣາເອນສິບສອງເຜົ່າແທນໂຢເຊັບ**

③ໃຜຄື **"ລູກຂອງເຈົ້າທີ່ເກີດມາພາຍຫຼັງ"**?

**(3)ຢູດາເປັນລູກຫົວປີຕາມໜັງສືລຳດັບເຊື້ອສາຍ**

**1 ຂ່າວຄາວ 5:2** ເຖິງແມ່ນວ່າຢູດາມີກຳລັງຫຼາຍ ໃນພວກພີ່ນ້ອງຂອງຕົນ ແລະເຈົ້ານາຍອົງໜຶ່ງກໍອອກມາຈາກເຂົາແຕ່ສິດທິລູກຫົວປີກໍເປັນຂອງໂຢເຊັບ

**1 ຂ່າວຄາວ 4:1** ລູກຊາຍຂອງຢູດາຊື່ວ່າ ເປເຣັດ, ເຮດຊະໂຣນ, ການມີ. ຮູເຣ ແລະ ໂຊບານ

**ມັດທາຍ 1:2** ອັບຣາຮາມມີບຸດຊາຍຊື່ອີຊາກ ອີຊາກມີບຸດຊາຍຊື່ຢາໂຄບ ຢາໂຄບມີບຸດຊາຍຊື່ຢູດາແລະອ້າຍນ້ອງຂອງຕົນ.

ຕາມລຳດັບເຊື້ອສາຍນັ້ນ ພຣະເຢຊູສະເດັດມາທາງເຜົ່າຢູດາ ແຕ່ທີ່ຈິງ ພຣະອົງສະເດັດມາໂດຍບໍ່ມີລຳດັບວົງຕະກູນເພາະ**ພຣະອົງຊົງປະຕິສົນທິໂດຍພຣະວິນຍານບໍຣິສຸດ**

**ມັດທາຍ 1:18** ເລື່ອງລາວການເກີດຂອງພຣະເຢຊູຄຣິດເປັນດັ່ງນີ້: ມາຣີອາແມ່ຂອງພຣະອົງເປັນຄູ່ໝັ້ນຂອງໂຢເຊັບ ກ່ອນທີ່ທັງສອງໄດ້ຢູ່ກິນຮ່ວມກັນ ນາງໄດ້ຕັ້ງທ້ອງແລ້ວ ດ້ວຍຣິດເດດຂອງພຣະວິນຍານບໍຣິສຸດເຈົ້າ

**4. ການເນັ້ນໜັກລຳດັບເຊື້ອສາຍຂອງຢາເບດ**

ໃນຂະນະທີ່ລຳດັບເຊື້ອສາຍອື່ນໆ ໃນຂ່າວຄາວມີແຕ່ຊື່ຕ່າງໆກັນ ຢາເບດນັ້ນມີຄວາມພິເສດເພາະມີລາຍລະອຽດກ່ຽວກັບຊີວິດຂອງເຂົາ

**(1) ຢາເບດເປັນເຊື້ອສາຍຂອງຢູດາ**

ລຳດັບເຊື້ອສາຍໃນພຣະຄຳຂ່າວຄາວ ເນັ້ນໜັກເຖິງລູກຫຼາຍຂອງຢູດາ ໂດຍເນັ້ນໜັກທີ່ຢາເບດຫຼາຍທີ່ສຸດ **ດັ່ງນັ້ນ ຢາເບດເປັນບຸກຄົນທີ່ເນັ້ນໜັກຫຼາຍທີ່ສຸດໃນລຳດັບເຊື້ອສາຍຂອງພຣະຄຳຂ່າວຄາວ**

**1 ຂ່າວຄາວ 4:9-10** ມີຊາຍຄົນໜຶ່ງຊື່ວ່າຢາເບດແລະລາວໄດ້ຮັບການນັບຖືຫຼາຍກວ່າໝູ່ໃນຄອບຄົວ. ແມ່ຂອງລາວໄດ້ໃສ່ຊື່ວ່າຢາເບດ ເພາະເມື່ອຄອດລາວອອກມານັ້ນ ນາງໄດ້ຮັບຄວາມເຈັບປວດຫຼາຍ. 10 ແຕ່ຢາເບດໄດ້ພາວັນນາອາທິຖານຕໍ່ພຣະເຈົ້າແຫ່ງຊາດອິດສະຣາເອນວ່າ "ໂອພຣະເຈົ້າເອີຍ ໂຜດອວຍພອນຂ້ານ້ອຍແລະໃຫ້ຂ້ານ້ອຍມີດິນແດນຢ່າງຫຼວງຫຼາຍ

ແດ່ທ້ອນ. ໂຜດສະຖິດຢູ່ນຳຂ້ານ້ອຍແລະຮັກສາຂ້ານ້ອຍໃຫ້ພົ້ນຈາກການຊົ່ວຮ້າຍນາໆປະການແດ່ທ້ອນຊຶ່ງໄດ້ເຮັດໃຫ້ຂ້ານ້ອຍໄດ້ຮັບຄວາມເຈັບປວດ" ພຣະເຈົ້າໄດ້ໃຫ້ສິ່ງທີ່ລາວໄດ້ພາວັນນາອະທິຖານຂໍນັ້ນ

**(2) ຢາເບດເປັນຕົວແທນຂອງຊາວອິດສະຣາເອນທັງໝົດທີ່ກັບມາຈາກການເປັນຊະເລີຍໃນບາບີໂລນ**

| ຢາເບດ | ອິດສະຣາເອນທີ່ກັບຈາກບາບີໂລນ |
|---|---|
| ເກີດມາພ້ອມກັບຄວາມເຈັບປວດ(1.ຂ່າວຄາວ 4:9) | ພວມກັບຈາກບາບີໂລນ ດິນແດນແຫ່ງຄວາມເຈັບປວດ |
| ພຣະເຈົ້າຕອບຕາມທີ່ເຂົາຮ້ອງຂໍ(1ຂ່າວຄາວ 10:4 ) ແລະເຂົາກໍກາຍເປັນຜູ້ມີກຽດ (1ຂ່າວຄາວ 9:4 ) | ເຮົາສາມາດກາຍເປັນຜູ້ມີກຽດໄດ້ ເມື່ອພຣະເຈົ້າປະທານຕາມຄຳຂໍຂອງເຮົາ |
| <ຄຳອະທິຖານ><br>① ຂໍອວຍພອນຂ້ແກ່ຂ້າພະເຈົ້າ<br>②ແລະຂະຫຍາຍເຂດແດນຂອງຂ້າພະເຈົ້າ<br>③ ຂໍພຣະຫັດພຣະອົງຢູ່ກັບຂ້າພະເຈົ້າ<br>④ ຂໍຮັກສາຂ້າພະເຈົ້າໃຫ້ພົ້ນຈາກເຫດບໍ່ດີ<br>⑤ ບໍ່ໃຫ້ຂ້າພະເຈົ້າເຈັບໃຈປວດກາຍ | ນີ້ຕ້ອງເປັນຄຳອະທິຖານຂອງເຮົາດ້ວຍ |

① "ຄວາມເຈັບປວດ"ໃນພາສາເຮັບເຣີຄື *otsev* (עֹצֶב).
ຄຳນີ້ໃຊ້ເພື່ອອະທິບາຍຄວາມເສົ້າໂສກຂອງຊາວອິດສະຣາເອນລະຫວ່າງທີ່ຕົກຢູ່ໃນການເປັນຊະເລີຍທີ່ບາບີໂລນ

> **ເອຊາຢາ 14:3** ອົງພຣະຜູ້ເປັນເຈົ້າຈະໃຫ້ປະຊາຊົນອິດສະຣາເອນໄດ້ບັນເທົາຄວ່ມເຈັບປວດ (**עֹצֶב**) ແລະຄວາມທົນທຸກຂອງພວກເຂົາແລະຈະໃຫ້ພວກເຂົາພົ້ນຈາກການຖືກບັງຄັບໃຫ້ເຮັດວຽກໜັກ

② "ມີກຽດ" ຄືຄຳວ່າ *khaved* (כָּבֵד), ເຊິ່ງແປວ່າ "ມີສະຫງ່າຣາສີ"
ຄຳນີ້ໃຊ້ໃນພັນທະສັນຍາຂອງພຣະເຈົ້າທີ່ຈະປົດປ່ອຍຊາວອິດສະຣາເອນຈາກການເປັນຊະເລີຍຂອງຊາວບາບີໂລນແລະເຮັດໃຫ້ພວກເຂົາໄດ້ຮັບກຽດ

> **ເອຊາຢາ 43:4** ເຮົາເຈະໃຫ້ທຸກຊົນຊາດຍອມຊ່ວຍກູ້ຄືກັນຄືຊ່ວຍກອບກູ້ເອົາຊີວິດຂອງພວກເຈົ້າໄວ້ (**כָּבֵד**) ເພາະພວກເຈົ້າມີຄ່າຫຼາຍສຳລັບເຮົາ ເພາະເຮົາຮັກພວກເຈົ້າຫຼາຍຈຶ່ງໃຫ້ກຽດພວກເຈົ້າ.
> **ພຣະນິມິດ 18:4** ແລ້ວຂ້າພະເຈົ້າໄດ້ຍິນສຽງໜຶ່ງອີກຈາກສະຫວັນກ່າວວ່າ "ໄພ່ພົນຂອງເຮົາເອີຍຈົ່ງອອກມາຈາກມະຫານະຄອນນັ້ນເສຍ ເພື່ອເຈົ້າທັງຫຼາຍຈະບໍ່ມີສ່ວນ ໃນການບາບຂອງມັນເພື່ອເຈົ້າຈະບໍ່ຖືກໄພອັນຕະລາຍ ທີ່ຈະເກີດຂຶ້ນແກ່ມັນນັ້ນ

**ບົດສະຫຼຸບ: ເນັ້ນໜັກທີ່ພຣະເຢຊູຄຣິດ ມະຫາປະໂລຫິດຂອງເຮົາ**

**(1) ໂຄງສ້າງຂອງໜັງສືລຳດັບເຊື້ອສາຍຕາມພຣະຄຳຂ່າວຄາວ**

A 1 ຂ່າວຄາວ 1:1-54; ໂລກຍຸກກ່ອນອິດສະຣາເອນ (ຮາກເຫງົ້າຂອງອິດສະຣາເອນ)

B 1 ຂ່າວຄາວ 2:1-2; ບັນດາບຸດຂອງອິດສະຣາເອນ

C 1 ຂ່າວຄາວ 2:3-4:23; ຢູດາເຜົ່າຂອງກະສັດດາວິດ -

D 1 ຂ່າວຄາວ 4:24-5:26; ເຜົ່າຕ່າງໆ ຂອງອິດສະຣາເອນ

E 1 ຂ່າວຄາວ 6:1-47; ເຊື້ອສາຍຂອງມະຫາປະໂລຫິດແລະເຜົ່າເລວີ

F 1 ຂ່າວຄາວ 6:48-49; ໜ້າທີ່ຂອງປະໂລຫິດ

F' 1 ຂ່າວຄາວ 6:50-53; ມະຫາປະໂລຫິດ

E' 1 ຂ່າວຄາວ 6:54-81; ເຊື້ອສາຍຂອງເລວີໃນການຕັ້ງຖິ່ນຖານ

D' 1 ຂ່າວຄາວ 7:1-40; ເຜົ່າຕ່າງໆ ຂອງອິດສະຣາເອນ

C' 1 ຂ່າວຄາວ 8:1-40; ເບນຢາມິນ -ເຜົ່າຂອງກະສັດໂຊນ

B' 1 ຂ່າວຄາວ 9:1a; ຈຳນວນອິດສະຣາເອນທັງໝົດທີ່ໄດ້ຮັບການນັບ

A' 1 ຂ່າວຄາວ 9:1b-34; ການສ້າງຊຸມຊົນໃໝ່ຂອງອິດສະຣາເອນ

**(2) ການເນັ້ນໜັກທີ່ລຳດັບວົງຕະກູນຂອງມະຫາປະໂລຫິດຫຼາຍທີ່ສຸດ**

① ພຣະເຢຊູເປັນມະຫາປະໂລຫິດຕາມແບບຢ່າງຂອງເມຄີເຊເດັກ.

> **ເຮັບເຣີ 6:20** ທີ່ພຣະເຢຊູຜູ້ຊົງນຳໜ້າໄດ້ສະເດັດເຂົ້າໄປກ່ອນແທນພວກເຮົາແລ້ວ ເພາະພຣະອົງໄດ້ຊົງກາຍເປັນມະຫາປະໂລຫິດຕະຫຼອດໄປໃນລຳດັບດຽວກັບເມຄີເຊເດັກ.

② ຕາມແບບຢ່າງຂອງເມຄີເຊເດັກ. ນັ້ນຄືບໍ່ມີລຳດັບເຊື້ອສາຍ

**ເຮັບເຣີ 7:1–3** ສ່ວນເມຄີເຊເດັກຜູ້ນີ້ ຄືກະສັດເມືອງຊາເລັມ ເປັນປະໂລຫິດຂອງພຣະເຈົ້າຜູ້ສູງສຸດໄດ້ພົບອັບຣາຮາມ ຂະນະທີ່ອັບຣາຮາມກຳລັງກັບມາຈາກການຮົບກັບກະສັດທັງຫຼາຍດ້ວຍໄຊຊະນະແລະໄດ້ຊົງອວຍພອນແກ່ເພິ່ນ. 2 ອັບຣາຮາມໄດ້ແບ່ງສິ່ງຂອງທັງໝົດເປັນສິບສ່ວນເອົາສ່ວນໜຶ່ງຖວາຍແກ່ເມຄີເຊເດັກ ເມຄີເຊເດັກແປຢ່າງໜຶ່ງວ່າກະສັດແຫ່ງຄວາມຊອບທຳຕາມຄວາມໝາຍແຫ່ງພຣະນາມຂອງທ່ານ ແລະອີກທັງເປັນກະສັດແຫ່ງສັນຕິສຸກ ຕາມຄວາມໝາຍຂອງຊື່ເມືອງຊາເລັມ. 3 ບິດາມານດາ ຫຼືເຊື້ອວົງຂອງທ່ານບໍ່ມີກ່າວໄວ້ ວັນຕົ້ນແລະວັນປາຍແຫ່ງຊີວິດຂອງທ່ານ ກໍບໍ່ມີເໝືອນກັນ ແຕ່ເປັນເໝືອນພຣະບຸດພຣະເຈົ້າ ຈຶ່ງດຳລົງຢູ່ເປັນປະໂລຫິດສືບໆໄປ.

③ ເພື່ອໃຫ້ມີກາຍເນື້ອໜັງ ພຣະເຢຊູຈຶ່ງຕ້ອງປະຕິສົນທິໂດຍພຣະວິນຍານບໍຣິສຸດ

> **ມັດທາຍ 1:18** ເລື່ອງພຣະກຳເນີດຂອງພຣະເຢຊູຄຣິດເປັນດັ່ງນີ້: ມາຣີອາແມ່ຂອງພຣະອົງເປັນຄູ່ໝັ້ນຂອງໂຢເຊັບກ່ອນທີ່ທັ້ງສອງໄດ້ຢູ່ກິນຮ່ວມກັນ ນາງໄດ້ຕັ້ງທ້ອງແລ້ວ ດ້ວຍລິດເດດຂອງພຣະວິນຍານບໍລິສຸດເຈົ້າ

ດັ່ງນັ້ນ ສະຫຼຸບສາລະສຳຄັນຄື ພຣະເຢຊູບໍ່ມີລຳດັບເຊື້ອສາຍ

④ ເຮົາກໍຕ້ອງເປັນໄປຕາມແບບຢ່າງຂອງເມຄີເຊເດັກດ້ວຍເພື່ອເຂົ້າສູ່ແຜ່ນດິນຂອງພຣະເຈົ້າ

**ໂຢຮັນ 1:12** ແຕ່ສ່ວນບັນດາຜູ້ທີ່ຕ້ອນຮັບພຣະອົງ ຄືຜູ້ທີ່ເຊື່ອໃນພຣະນາມພຣະອົງ ພຣອົງກໍຊົງປະທານສິດໃຫ້ກາຍເປັນບຸດຂອງພຣະເຈົ້າ.

**ໂຢຮັນ 3:5** ພຣະເຢຊູເຈົ້າຕອບຄືນວ່າ “ເຮົາບອກທ່ານຕາມຄວາມຈິງວ່າ ຖ້າຜູ້ໃດບໍ່ໄດ້ບັງເກີດຈາກນ້ຳແລະຈາກພຣະວິນຍານ ຜູ້ນັ້ນເຂົ້າໃນໄປອານາຈັກຂອງພຣະເຈົ້າບໍ່ໄດ້.

**1 ໂກຣິນໂທ 12:3** ເຫດສັນນັ້ນເຮົາຢາກໃຫ້ພວກເຈົ້າຮູ້ວ່າ ບໍ່ມີຜູ້ໃດດອກ ທີ່ມີພຣະວິນຍານຂອງພຣະເຈົ້າ ຈະກ່າວວ່າ “ ຂໍໃຫ້ພຣະເຢຊູຖືກດ່າ” ແລະບໍ່ມີຜູ້ໃດດອກອາດເວົ້າໄດ້ວ່າ “ ພຣະເຢຊູເປັນອົງພຣະຜູ້ເປັນເຈົ້າ” ເວັ້ນໄວ້ແຕ່ຜູ້ທີ່ກ່າວໂດຍພຣະວິນຍານບໍລິສຸດເຈົ້າ.

**ມັດທາຍ 10:37–38** ຜູ້ທີ່ຮັກພໍ່ແມ່ຂອງຕົນຫຼາຍກວ່າເຮົາ ກໍບໍ່ສົມຄວນເປັນສາວົກຂອງເຮົາ 38 ຜູ້ທີ່ບໍ່ຮັບເອົາໄມ້ກາງແຂນຂອງຕົນ ກໍບໍ່ສົມຄວນເປັນສາວົກຂອງເຮົາ

2021. 09. 18

# SINGAPORE

## HISTORY OF REDEMPTION SEMINAR

## Lecture 2

HORA
The History of Redemption for All Nations

History of Redemption Seminar 2
ສໍາມະນາປະຫວັດສາດການໄຖ່ 2

**ພຣະເຢຊູຄຣິດ ມະຫາປະໂຣຫິດຊື່ອມີຣັນດອນ**
**(1 ຂຄ 4:9-10)**

ມະຫາປະໂຣຫິດ *kohen gadol* (כֹּהֵן גָּדוֹל) ໃນພາສາເຮັບເຣີເຊິ່ງແປວ່າ "ປະໂຣຫິດໃຫຍ່ ປະໂຣຫິດທີ່ຍິ່ງໃຫຍ່ "ແລະ *kohen rosh* (כֹּהֵן רֹאשׁ) ເຊິ່ງແປວ່າ "ປະໂຣຫິດຜູ້ເປັນຫົວໜ້າ"

> **ລະບຽບພວກເລວີ 21:10** "<u>ສ່ວນມະຫາປະໂຣຫິດນັ້ນ</u> ແມ່ນຜູ້ໜຶ່ງທີ່ໄດ້ຮັບການຫົດສົງສະຖາປະນາດ້ວນໍ້າມັນເຈີມສັກສິດໃສເທິງຫົວ ແລະ ທັງໄດ້ຖືກສະຖາປະນາໃຫ້ນຸ່ງເຄື່ອງປະຈໍາຕໍາແໜ່ງປະໂຣຫິດໃນທ່າມກາງພີ່ນ້ອງຂອງຕົນ. ສະນັ້ນ ລາວຈຶ່ງບໍ່ຕ້ອງປ່ອຍຜົມໃຫ້ຫຍຸ້ງ ຫຼື ຈີກເຄື່ອງນຸ່ງຂອງຕົນເປັນການໄວ້ທຸກ

ມະຫາປະໂຣຫິດໃນພັນທະສັນຍາເດີມນັ້ນເປັນເງົາເຖິງພຣະເຢຊູ ຜູ້ເປັນມະຫາປະໂຫຍດທີ່ແທ້ຈິງ

> **ເຮັບເຣີ 3:1** ດັ່ງນັ້ນ ພີ່ນ້ອງຊາຍຍິງຜູ້ບໍຣິສຸດທັງຫຼາຍທີ່ພຣະເຈົ້າເອີ້ນມາດ້ວຍກັນກັບເຮົາເອີຍ <u>ຈົ່ງພິຈາລະນາເບິ່ງອັກຄະສາວົກ ແລະມະຫາປະໂຣຫິດແຫ່ງຄວາມເຊື່ອຂອງພວກເຮົາ ຄືພຣະເຢຊູເຈົ້າ.</u>

ພຣະເຢຊູຄືມະຫາປະໂຣຫິດເປັນນິດຂອງເຮົາ

> **ເຮັບເຣີ 6:20** ທີ່ພຣະເຢຊູເຈົ້າຜູ້ຊິງນໍາໜ້າ ໄດ້ສະເດັດເຂົ້າໄປກ່ອນແທນພວກເຮົາແລ້ວ ເພາະພຣະອົງໄດ້ຊົງກາຍເປັນພຣະ<u>ມະຫາປະໂຣຫິດຕະຫຼອດໄປໃນລໍາດັບດຽວກັບເມຄີເຊເດັກ.</u>

**1. ມະຫາປະໂຣຫິດເລືອກມາຈາກມະນຸດ**

**(1) ມະຫາປະໂຣຫິດໃນພັນທະສັນຍາເດີມເປັນມະນຸດ**

> **ເຮັບເຣີ 5:1** ຝ່າຍ<u>ມະຫາປະໂຣຫິດທຸກຄົນນັ້ນ</u> ແມ່ນຜູ້ຖືກເລືອກໄວ້ຈາກມະນຸດ ແລະຖືກແຕ່ງຕັ້ງໃຫ້ເປັນຜູ້ຮັບໃຊ້ພຣະເຈົ້າແທນມະນຸດ ເພື່ອຖວາຍເຄື່ອງບູຊາ ແລະເຄື່ອງຖວາຍເພື່ອລຶບລ້າງບາບ.

**1) ມະຫາປະໂຣຫິດເລືອກມາຈາກມະນຸດ**

ໃນເຮັບເຣີ **5:1** ຄໍາວ່າ "ຖືກເລືອກ" ເປັນສັບໃນຮູບຖືກກະທໍາຂອງຄໍາວ່າ "ລາມບາໂນ" **λαμβάνω** (*lambano*) , ຊຶ່ງແປວ່າ "ຍຶດໄວ້, ເລືອກໄວ້"

**2) ຕ້ອງຖວາຍທັງເຄື່ອງບັນນາການແລະເຄື່ອງບູຊາລຶບລ້າງບາບ**

> **ເຮັບເຣີ 5:1** ຝ່າຍມະຫາປະໂຣຫິດທຸກຄົນນັ້ນ ແມ່ນຜູ້ຖືກເລືອກໄວ້ຈາກມະນຸດ ແລະຖືກແຕ່ງຕັ້ງໃຫ້ເປັນຜູ້ຮັບໃຊ້ພຣະເຈົ້າແທນມະນຸດ <u>ເພື່ອຖວາຍເຄື່ອງບູຊາ ແລະເຄື່ອງຖວາຍ</u>ເພື່ອລຶບລ້າງບາບ.
>
> **ເຮັບເຣີ 8:3** <u>ເພາະວ່າມະຫາປະໂຣຫິດທຸກຄົນ ໄດ້ຮັບແຕ່ງຕັ້ງເພື່ອໃຫ້ຖວາຍຂອງທານ ແລະຂ້າສັດບູຊາ</u>ແກ່ພຣະເຈົ້າ. ດັ່ງນັ້ນ ມະຫາປະໂຣຫິດ ຈຶ່ງຈໍາເປັນຕ້ອງມີສິ່ງຂອງຖວາຍແກ່ພຣະເຈົ້າເໝືອນກັນ.

**(2) ພຣະເຢຊູຊົງເປັນມະຫາປະໂຣຫິດຜູ້ຊົງເປັນພຣະເຈົ້າ ທີ່ມາເກີດເປັນມະນຸດ**

**ໂຢຮັນ 1:1** ເມື່ອຕົ້ນເດີມນັ້ນ ພຣະທຳຊົງເປັນຢູ່ແລ້ວ ພຣະທຳນັ້ນຊົງສະຖິດຢູ່ກັບພຣະເຈົ້າ ແລະພຣະທຳນັ້ນແຫຼະ ຊົງເປັນພຣະເຈົ້າ.

**ໂຢຮັນ 1:14** ພຣະທຳໄດ້ຊົງບັງເກີດເປັນມະນຸດ ແລະອາໄສຢູ່ທ່າມກາງເຮົາທັງຫຼາຍ ບໍຣິບູນດ້ວຍພຣະຄຸນແລະຄວາມຈິງ ເຮົາທັງຫຼາຍໄດ້ເຫັນສະຫງ່າຣາສີຂອງພຣະອົງ ຄືສະຫງ່າຣາສີທີ່ພຣະອົງໄດ້ຮັບ ໃນຖານະທີ່ເປັນພຣະບຸດອົງດຽວຂອງພຣະບິດາເຈົ້າ

**1) ຄວາມເປັນມະຫາປະໂຣຫິດທີ່ບໍ່ມີການປ່ຽນແປງ (ບໍ່ປ່ຽນຕົວມະຫາປະໂຣຫິດ)**

**ເຮັບເຣີ 7:12** ເພາະເມື່ອຕຳແໜ່ງປະໂຣຫິດປ່ຽນແປງໄປແລ້ວ ກົດບັນຍັດກໍຈຳເປັນຕ້ອງປ່ຽນແປງເໝືອນກັນ

**2) ມະຫາປະໂຣຫິດເປັນນິດ**

**ເຮັບເຣີ 6:20** ທີ່ພຣະເຢຊູເຈົ້າຜູ້ຊົງນຳໜ້າ ໄດ້ສະເດັດເຂົ້າໄປກ່ອນແທນພວກເຮົາແລ້ວ ເພາະພຣະອົງໄດ້ຊົງກາຍເປັນພຣະມະຫາປະໂຣຫິດ ຕະຫຼອດໄປໃນລຳດັບດຽວກັບເມຄີເຊເດັກ.

**(3) ຄວາມສຳຄັນທາງປະຫວັດສາດແຫ່ງການໄຖ່**

1) ມີພຽງພຣະເຢຊູເທົ່ານັ້ນທີ່ເປັນຄົນກາງລະຫວ່າງພຣະເຈົ້າກັບມະນຸດ

**1 ຕີໂມທຽວ 2:5** ດ້ວຍວ່າ, ມີພຣະເຈົ້າອົງດຽວ ແລະມີຜູ້ກາງແຕ່ຜູ້ດຽວ ລະຫວ່າງພຣະເຈົ້າກັບມະນຸດ ຄືພຣະຄຣິດເຈົ້າເຢຊູຜູ້ຊົງສະພາບເປັນມະນຸດ

2) ມີພຽງພຣະເຢຊູເທົ່ານັ້ນທີ່ປາສະຈາກບາບ.

**ເຮັບເຣີ 7:27** ພຣະອົງບໍ່ຕ້ອງຊົງນຳເຄື່ອງບູຊາມາທຸກໆວັນ ເໝືອນດັ່ງມະຫາປະໂຣຫິດຄົນອື່ນໆ ຜູ້ຊຶ່ງຕອນທຳອິດຖວາຍສຳລັບການບາບຂອງຕົນເອງແລ້ວຈຶ່ງຖວາຍສຳລັບຄວາມບາບຂອງພົນລະເມືອງສ່ວນພຣະອົງ ໄດ້ຊົງຖວາຍເຄື່ອງບູຊາພຽງເທື່ອດຽວເປັນການສິ້ນສຸດ ຄືເມື່ອພຣະອົງໄດ້ຊົງນຳພຣະອົງເອງມາຖວາຍ

**ເຮັບເຣີ 4:15** ເພາະວ່າ ພວກເຮົາບໍ່ໄດ້ມີມະຫາປະໂຣຫິດ ທີ່ບໍ່ສາມາດຈະເຫັນໃຈໃນຄວາມອ່ອນແອຂອງພວກເຮົາ, ແຕ່ມີຕົນໜຶ່ງທີ່ຊົງຖືກທົດລອງເໝືອນຢ່າງເຮົາທຸກປະການ, ເຖິງປານນັ້ນ ພຣະອົງກໍຍັງບໍ່ມີບາບ.

**2 ໂກຣິນໂທ 5:21** ເພາະວ່າ ພຣະເຈົ້າໄດ້ຊົງກະທຳໃຫ້ພຣະຄຣິດ ຜູ້ຊົງບໍ່ມີຄວາມຜິດບາບນັ້ນ ໄດ້ເຂົ້າສ່ວນກັບຄວາມຜິດຂອງພວກເຮົາ ເພື່ອພວກເຮົາຈະໄດ້ເຂົ້າສ່ວນໃນຄວາມຊອບທຳຂອງພຣະເຈົ້າໂດຍທາງພຣະອົງ

**2. ມະຫາປະໂຣຫິດເຂົ້າໄປໃນສະຖານທີ່ສັກສິດປີລະເທື່ອ**

**(1) ເຂົາເຂົ້າໄປເມື່ອໃດ? - ໃນວັນລຶບລ້າງບາບ ວັນທີສິບ ເດືອນທີເຈັດ**

**ເຮັບເຣີ 9:7** ສ່ວນຫ້ອງຊັ້ນໃນນັ້ນ ມີແຕ່ມະຫາປະໂຣຫິດຜູ້ດຽວເທົ່ານັ້ນທີ່ເຂົ້າໄປໄດ້ ແລະເພິ່ນເຂົ້າໄປໄດ້ປີລະເທື່ອເທົ່ານັ້ນ. ເພິ່ນຕ້ອງນຳເລືອດສັດເຂົ້າໄປຖວາຍແກ່ພຣະເຈົ້າສຳລັບຕົນເອງ ແລະເພື່ອຄວາມຜິດໂດຍບໍ່ເຈດຕະນາຂອງປະຊາຊົນ.

**ລະບຽບພວກເລວີ 25:9** ແລ້ວໃນວັນທີສິບຂອງເດືອນທີເຈັດແມ່ນວັນລຶບລ້າງບາບ ຈົ່ງໃຊ້ຄົນເປົ່າແກປ່າວເຕືອນໄປທົ່ວປະເທດ

**ລະບຽບພວກເລວີ 16:29** ລະບຽບການດັ່ງກ່າວນີ້ໃຫ້ຢຶດຖືໄວ້ທຸກຍຸກທຸກສະໄໝສືບໄປ. ໃນວັນທີສິບຂອງເດືອນທີເຈັດຊາວອິດສະຣາເອນກັບຊາວຕ່າງດ້າວທີ່ອາໄສຢູ່ທ່າມກາງພວກເຈົ້າ ຕ້ອງຖືສິນອົດອາຫານແລະບໍ່ຕ້ອງເຮັດວຽກທຳງານໃດໆທັງສິ້ນ

**(2) ຕ້ອງເຂົ້າໄປຈັກຄັ້ງ? – 4ຄັ້ງ**

**1) ຄັ້ງທຳອິດ ເຂົາເຂົ້າໄປພ້ອມກັບຖ່ານໄຟລຸກແດງ**

**ລະບຽບພວກເລວີ 16:12** <u>ເພິ່ນຕ້ອງເອົາໝໍ້ຂາງທີ່ມີຖ່ານໄຟ</u>ລຸກແດງຢູ່ຈາກແທ່ນບູຊາທີ່ຢູ່ຕໍ່ໜ້າພຣະເຈົ້າຢາເວ ພ້ອມທັງກຳຍານທີ່ບົດໃຫ້ລະອຽດແລ້ວສອງກຳ ມາບ່ອນສັກສິດທີ່ສຸດ

**ຂໍ້ນີບອກວ່າເຂົາຈະຕ້ອງຕາຍ ຖ້າຂາດການອະທິຖານ**

**ພຣະນິມິດ 5:8** ເມື່ອຮັບເອົາໜັງສືມ້ວນນັ້ນແລ້ວ ສິ່ງທີ່ມີຊີວິດທັງສີ່ພ້ອມກັບພວກຜູ້ອາວຸໂສ້ຊາວສີ່ທ່ານ ກໍກົ້ມຂາບລົງແທບຕີນພຣະເມສານ້ອຍນັ້ນ ແຕ່ລະຄົນຖືພິນແລະຂັນຄຳທີ່ເຕັມດ້ວຍ<u>ເຄື່ອງຫອມ ຊຶ່ງເປັນຄຳພາວັນນາອະທິຖານແຫ່ງໄພ່ພົນທັງປວງຂອງພຣະເຈົ້າ</u> (ພຣະນິມິດ 8:3-5)

**ເພງສັນລະເສີນ 141:2** <u>ຂໍໃຫ້ຄຳພາວັນນາອະທິຖານຂອງຂ້ານ້ອຍເປັນດັ່ງເຄື່ອງຫອມບູຊາ</u> ແລະຍໍມືຂຶ້ນໄຫວ້ວອນເປັນດັ່ງເຄື່ອງຖວາຍບູຊາໃນຕອນແລງເຖີດ.

**2) ຄັ້ງທີສອງ ເຂົາເຂົ້າໄປພ້ອມກັບເລືອດຂອງງົວ**

**ລະບຽບພວກເລວີ 16:14** ເພິ່ນຈະຕ້ອງເອົາ<u>ເລືອດບາງສ່ວນຂອງງົວເຖິກ</u>ໜຸ່ມມາ ແລະໃຊ້ນິ້ວມືຊິດເລືອດນັ້ນໃສ່ເທິງດ້ານໜ້າຂອງຝາອັດຫີບພັນທະສັນຍາແລ້ວຊິດເລືອດນັ້ນອີກເຈັດເທື່ອໃສ່ທາງດ້ານໜ້າຂອງຫີບພັນທະສັນຍາ

**ການປະພົມດ້ວຍເລືອດເຈັດຄັ້ງສະທ້ອນເຖິງການລຶບລ້າງບາບທີ່ຄົບຖ້ວນສົມບູນ**

**ລະບຽບພວກເລວີ 16:11** ເມື່ອອາໂຣນຖວາຍບູຊາງົວເຖິກໜຸ່ມ <u>ເພື່ອລຶບລ້າງບາບຂອງຕົນແລະຄົນໃນຄອບຄົວນັ້ນ</u>

**3) ຄັ້ງທີສາມ ເຂົາເຂົ້າໄປພ້ອມດ້ວຍເລືອກຂອງແບ້**

**ລະບຽບພວກເລວີ 16:15** "ຫຼັງຈາກນັ້ນ ເພິ່ນຈະຕ້ອງ<u>ຂ້າແບ້ເພື່ອຖວາຍລຶບລ້າງບາບຂອງປະຊາຊົນ</u>ແລ້ວນຳເລືອດແບ້ນັ້ນເຂົ້າໄປໃນບ່ອນສັກສິດທີ່ສຸດ ເພື່ອຊິດໃສ່ເມິງຝາອັດຫີບແລະຊິດ ໃສທາງດ້ານໜ້າຂອງຫີບພັນທະສັນຍາແບບດຽວກັບຊິດເລືອດຂອງງົວເຖິກໜຸ່ມ.

**4) ຄັ້ງທີສີ່ ເຂົານຳຖ່ານໄຟລຸກແດງອອກມາ**

ເຂົາຈະນຳຖ່ານໄຟທີ່ນຳເຂົ້າໄປຄັ້ງທຳອິດອອກມາ (ມີຊະນາ, ໂຢມາ 5:1; 8:4)

**(3) ສິ່ງທີ່ມະຫາປະໂຣຫິດກະທຳລະຫວ່າງການອອກຈາກຫ້ອງສະຖານທີ່ສັກສິດຄັ້ງທີສາມກັບການເຂົ້າໄປຄັ້ງທີສີ່ນັ້ນ ໄດ້ແກ່**

**1) ເຂົາຕ້ອງວາງມືເທິງຫົວຂອງແບ້ຮັບບາບ (ອາຊາເຊນ)**

**ລະບຽບພວກເລວີ 16:21** <u>ເພິ່ນຈະວາງມືທັງສອງຂອງເພິ່ນລົງເທິງຫົວແບ້ ແລະສາລະພາບສິ່ງຊົ່ວຮ້າຍທຸກຢ່າງ, ການບາບນາໆຊະນິດ</u> ແລະການທໍລະຍົດທຸກປະການຂອງປະຊາຊົນອິດສະຣາເອນ ແລະຍອງສິ່ງທັງໝົດນີ້ທີ່ເທິງຫົວຂອງແບ້ໂຕນັ້ນ. ຕໍ່ມາແບ້ໂຕນີ້ ກໍຈະຖືກນຳອອກໄປສູ່ຖິ່ນແຫ້ງແລ້ງກັນດານ ໂດຍຊາຍທີ່ໄດ້ຖືກເລືອກໄວ້

**2) ເຂົາຈະແກ້ເສື້ອແຕ່ງກາຍຜ້າປ່ານທີ່ແຕ່ງເຂົ້າໄປສະຖານທີ່ສັກສິດອອກ**

**ລະບຽບພວກເລວີ 16:23** "ແລ້ວອາໂຣນກໍຕ້ອງເຂົ້າໄປໃນຫໍເຕັນບ່ອນຊຸມນຸມ, ແກ້ເຄື່ອງປະຈໍາຕໍາແໜ່ງຂອງປະໂຣຫິດ ທີ່ເພິ່ນໄດ້ໃສ່ເມື່ອເຂົ້າໄປໃນບ່ອນສັກສິດ ແລະປະໄວ້ໃນທີ່ນັ້ນ.

**3) ເຂົາຕ້ອງອາບນໍ້າຊໍາລະຕົວແລະສວມໃສເສື້ອຜ້າຂອງເຂົາ (ເຄື່ອງແຕ່ງກາຍຂອງມະຫາປະໂຣຫິດ)**

**ລະບຽບພວກເລວີ 16:24** ເພິ່ນອາບນໍ້າຊໍາລະຕົວໃນບ່ອນສັກສິດ ແລະນຸ່ງເຄື່ອງແຕ່ງກາຍຂອງຕົນເອງຄືນ. ຫຼັງຈາກນັ້ນ ເພິ່ນຈະຕ້ອງອອກໄປຂ້າງນອກ ເພື່ອຖວາຍເຄື່ອງເຜົາບູຊາລຶບລ້າງການບາບຂອງຕົນແລະຂອງປະຊາຊົນ

**4) ເຂົາຕ້ອງເຄື່ອງເຜົາບູຊາ (ເຄື່ອງບູຊາປະຈໍາວັນ)**

**ລະບຽບພວກເລວີ 16:24** ເພິ່ນອາບນໍ້າຊໍາລະຕົວໃນບ່ອນສັກສິດ ແລະນຸ່ງເຄື່ອງແຕ່ງກາຍຂອງຕົນເອງຄືນ. ຫຼັງຈາກນັ້ນ ເພິ່ນຈະຕ້ອງອອກໄປຂ້າງນອກ ເພື່ອຖວາຍເຄື່ອງເຜົາບູຊາລຶບລ້າງການບາບຂອງຕົນແລະຂອງປະຊາຊົນ

**ໂຢຮັນ 13:10** ພຣະເຢຊູເຈົ້າກ່າວຕໍ່ເພິ່ນວ່າ, "ຜູ້ທີ່ໄດ້ອາບນໍ້າແລ້ວ ບໍ່ຈໍາເປັນຕ້ອງລ້າງຕົວອີກ ລ້າງແຕ່ຕີນເທົ່ານັ້ນກໍພໍ. ພວກເຈົ້າກໍເປັນຄົນສະອາດແລ້ວ, ແຕ່ບໍ່ແມ່ນໝົດທຸກຄົນ"

***5) ເຂົາຕ້ອງສວມຜ້າປ່ານໃໝ່ແລ້ວເຂົ້າໄປໃນສະຖານທີສັກສິດເປັນຄັ້ງທີສີ່ (ມີຊະນາ, ໜັງສືແຫ່ງມໍລະດົກຂອງເຮົາ)***

**(4) ຄວາມສໍາຄັນພາກປະຫວັດສາດແຫ່ງການໄຖ່**

**1) ຂະນະທີ່ພຣະເຢຊູສິ້ນພະຊົນເທິງໄມ້ກາງແຂນນັ້ນ ຜ້າກັ້ງທີ່ຂວາງກັນລະຫວ່າງສະຖານທີສັກສິດແລະສະຖານທີນັ້ນຖືກຈີກຂາດ**

**ມັດທາຍ 27:50-51** ພຣະເຢຊູເຈົ້າໄດ້ຮ້ອງສຽງດັງອີກເທື່ອໜຶ່ງ ແລ້ວກໍສິ້ນລົມຫາຍໃຈ. [51]ແລ້ວຜ້າກັ້ງໃນພຣະວິຫານ ກໍໄດ້ຈີກອອກເປັນສອງທ່ອນແຕ່ເທິງຮອດລຸ່ມ ແຜ່ນດິນກໍສະທ້ານຫວັ່ນໄຫວ ແລະໂງ່ນຫີນກໍແຕກອອກເປັນປ່ຽງໆ

**ເຮັບເຣີ 10:20** ຕາມທາງໃໝ່ຊຶ່ງມີຊີວິດ ທີ່ພຣະອົງໄດ້ຊົງໄຂອອກໃຫ້ພວກເຮົາຜ່ານເຂົ້າໄປທາງຜ້າກັ້ງ ຄືທາງພຣະກາຍຂອງພຣະອົງ

**2) ໂດຍທາງພຣະໂລຫິດເທິງໄມ້ກາງແຂນ ພຣະເຢຊູໄດ້ຖວາຍເຄື່ອງບູຊາຊື່ອນິຣັນດອນ ຄັ້ງດຽວເປັນພໍ**

**ເຮັບເຣີ 9:12** ເພາະວ່າໂມເຊໄດ້ປະກາດຄໍາສັ່ງທຸກຂໍ້ ໃນກົດບັນຍັດແກ່ໄພ່ພົນທັງໝົດແລ້ວ ເພິ່ນກໍໄດ້ເອົາເລືອດລູກງົວເຖິກແລະເລືອດແບ້ເຖິກປົນໃສ່ນໍ້າ ແລ້ວເອົາຂົນແກະສີແດງແລະໃບຫູວິລໃດໜຶ່ງ ມາຈຸ່ມແລະຊິດໃສ່ໜັງສືມ້ວນນັ້ນ ແລະຊິດໃສ່ໄພ່ພົນທັງໝົດ

**3. ມະຫາປະໂຣຫິດເປັນຜູ້ປົດປ່ອຍຄົນຈາກເມືອງລີ້ໄພ**

**(1) ເມືອງລີ້ໄພຄືຫຍັງ?**

**ເມືອງທີ່ຜູ້ຂ້າຄົນດ້ວຍໄດ້ບໍ່ມີເຈດຕະນາສາມາດໜີໄປຫຼົບທີ່ນັ້ນ**

**ໂຢຊວຍ 20:2-3** "ຈົ່ງກ່າວແກ່ຄົນອິດສະຣາເອນວ່າ '<u>ຈົ່ງເລືອກເອົາບັນດາເມືອງລີ້ໄພ</u> ຕາມທີ່ເຮົາໄດ້ສັ່ງໂມເຊໃຫ້ບອກພວກເຈົ້າ. [3]ບຸກຄົນໜຶ່ງທີ່<u>ຂ້າຄົນໂດຍບໍ່ເຈດຕະນາເຂົ້າໄປທີ່ນັ້ນໄດ້</u> ແລະ<u>ຫຼົບໜີຈາກຜູ້ຕາມຫາແກ້ແຄ້ນ.</u>

**ເຮົາເອງກໍອາດກາຍເປັນຜູ້ຂ້າຄົນໂດຍບໍ່ຮູ້ຕົວ ເມື່ອເຮົາກຽດຊັງຄົນອື່ນ**

> **1 ໂຢຮັນ 3:15** <u>ທຸກຄົນທີ່ກຽດຊັງພີ່ນ້ອງຂອງຕົນ ກໍເປັນຜູ້ຂ້າຄົນ</u> ພວກເຈົ້າຮູ້ແລ້ວວ່າ ຜູ້ຂ້າຄົນບໍ່ມີຊີວິດນິຣັນດອນຕັ້ງຢູ່ໃນເຂົາເລີຍ

**(2) ທາງດຽວທີ່ຈະອອກຈາກເມືອງລີ້ໄພໄດ້**

**→ ຄືມະຫາປະໂຣຫິດຈະຕ້ອງເຖິງແກ່ຄວາມຕາຍ**

> **ຈົດບັນຊີ 35:28** ຄົນມີຄວາມຜິດໃນຖານເປັນຜູ້ຂ້າຄົນໂດຍບໍ່ໄດ້ຕັ້ງໃຈ ຈະຕ້ອງຢູ່ໃນເມືອງລີ້ໄພ ຈົນກວ່າ<u>ປະໂຣຫິດປະຈຳການຢູ່ໃນສະໄໝນັ້ນຕາຍໄປ ຫຼັງຈາກນັ້ນແລ້ວ ລາວກໍກັບເມື່ອເຮືອນຂອງຕົນໄດ້</u>
>
> **ໂຢຊວຍ 20:6** ເຂົາອາດຈະຢູ່ໃນເມືອງຈົນກວ່າຈະໄດ້ຮັບການຕັດສິນຕໍ່ໜ້າມະຫາຊົນ ແລະຈົນກວ່າຜູ້ທີ່ເປັນ<u>ປະໂຣຫິດໃນເວລານັ້ນຕາຍກ່ອນ. ແລ້ວເຂົາກໍຈະໄດ້ກັບຄືນເມືອສູ່ເມືອງຂອງຕົນ</u> ບ່ອນທີ່ເຂົາໄດ້ປົບໜີມານັ້ນ."

**(3) ຄວາມສຳຄັນພາກປະຫວັດສາດການໄຖ່**

ຜູ້ຂ້າຄົນສາມາດກັບໄປຍັງບ້ານເມືອງຂອງຕົນໄດ້ເມື່ອມະຫາປະໂຣຫິດເສຍຊີວິດແລ້ວ ເຮົາກໍເຊັ່ນດຽວກັນ ເຮົາສາມາດຫຼຸດພົ້ນຈາກຄວາມບາບທຸກຢ່າງແລະເດີນທາງກັບໄປຍັງ**ແຜ່ນດິນສະຫວັນ**ໄດ້ ເພາະພຣະເຢຊູຜູ້ເປັນມະຫາປະໂຣຫິດຂອງເຮົາໄດ້ສິ້ນພະຊົນເທິງໄມ້ກາງແຂນ

**ໂຢຮັນ 14:1-3** "ໃຫ້ໃຈຂອງເຈົ້າທັງຫຼາຍວຸ້ນວາຍໄປ ຈົ່ງວາງໃຈເຊື່ອພຣະເຈົ້າ ແລະຈົ່ງວາງໃຈເຊື່ອ ໃນເຮົາເໝືອນກັນ [2]<u>ໃນຜາສາດພຣະບິດາ</u>ເຈົ້າຂອງເຮົາມີທີ່ຢູ່ຫຼາຍບ່ອນ ຖ້າບໍ່ມີ ເຮົາຄົງໄດ້ບອກພວກເຈົ້າແລ້ວ ເພາະເຮົາໄປຈັດແຈງບ່ອນໄວ້ສຳລັບພວກເຈົ້າແລ້ວ [3]<u>ເມື່ອເຮົາໄປຈັດຕຽມບ່ອນໄວ້ສຳລັບພວກເຈົ້າແລ້ວ</u> ເຮົາຈະກັບຄືນມາຮັບເອົາພວກເຈົ້າໄປຢູ່ກັບເຮົາ ເພື່ອວ່າເຮົາຢູ່ທີ່ໃດ ພວກເຈົ້າກໍຈະຢູ່ທີ່ນັ້ນເໝືອນກັນ.

**ເຮັບເຣີ 10:21-22** ເມື່ອພວກເຮົາມີພຣະ<u>ມະຫາປະໂຣຫິດ ຜູ້ທີ່ຮັບຜິດຊອບວິຫານຂອງພຣະເຈົ້າແລ້ວ.</u> [22]<u>ດັ່ງນັ້ນຈົ່ງໃຫ້ພວກເຮົາເຂົ້າມາໃກ້ດ້ວຍຄວາມຈິງໃຈ</u> ແລະດ້ວຍຄວາມເຊື່ອໝັ້ນອັນເຕັມບໍຣິບູນ ດ້ວຍໃຈທີ່ໄດ້ຮັບການຊຳລະຈາກຄວາມຮູ້ສຶກຕົວວ່າມີບາບກຳ ແລະມີຮ່າງກາຍທີ່ໄດ້ຊຳລະລ້າງແລ້ວນ້ຳບໍຣິສຸດ.

**ບົດສະຫຼຸບ: ໃນລຳດັບເຊື້ອສາຍຂອງມະຫາປະໂຣຫິດນັ້ນ ມີຄົນຢູ່ທັງໝົດ 77 ຊົ່ວອາຍຸຄົນ**

**(1) 77 ຊົ່ວອາຍຸຄົນໃນລຳດັບເຊື້ອສາຍຂອງມະຫາປະໂຣຫິດ**

| | | | | | | |
|---|---|---|---|---|---|---|
| ອາໂຣນ[1] | ເອເລອາຊາ[2] | ຟີເນຮາ[3] | ອາບີຊູອາ[4] | ບຸກກີ[5] | ອຸດຊີ[6] | ເຊຣາຮີຢາ[7] |
| ເມຣາອີໂຢດ[8] | ອາມາຣີຢາ[9] | ອາຮີຕູບ[10] | ຊາດົກ[11] | ອາຮີມາອາດ[12] | ອາຊາຣີຢາ[13] | ໂຢຮານານ[14] |
| ອາຊາຣີຢາ[15] | ອາມາຣີຢາ[16] | ອາຮີຕູບ[17] | ຊາດົກ[18] | ຊານລູມ[19] | ຮິນກີຢາ[20] | ອາຊາຣີຢາ[21] |
| ເສຣາອີຢາ[22] | ເຢໂຮຊາດັກ[23] | ໂຢຊວຍ[24] | ເຢໂຮຍອາກີມ[25] | ເອລີຢາຊີບ[26] | ໂຢອີອາດາ[27] | ໂຢນາທານ[28] |
| ຢັດດູອາ[29] | ໂອນີອັດ I[30] | ຊີໂມນ I[31] | ເອລີອາຊາ[32] | ມານາເຊ[33] | ໂອນີອັດII [34] | ຊີໂມນ II[35] |
| ໂອນີອັດIII[36] | ເຢສັນ[37] | ເມເນລາອຸດ[38] | ອັດຄີມັດ[39] | ໂຢນາທານ ອັດຟັດ[40] | ຊີໂມນ (III) ທາສຊີ[41] | ໂຢຮັນ ໄຮການັດ[42] |
| ອາຣິດໂຕບູລັດ I 43 | ອາເລັກຊັນເດີ 44 | ໄຮການັດII[45] | ອາຣິໂຕບູລັດ[46] | ໄຮການັດII [47] | ອັນຕິໂກນັດ[48] | ອານາເນດ[49] |
| ໄຮການັດIII[50] | ອານາເນດ[51] | ເຢຊູ[52] | ຊີໂມນ[53] | ມັດທາຍ[54] | ໂຢອາຊາ[55] | ເອເລອາຊາ[56] |
| ເຢຊູ[57] | ໂຢອາຊາ[58] | ອັນນາດ[59] | ອິດຊະມາເອນ[60] | ເອລີອາຊາ[61] | ຊີໂມນ[62] | ໂຢເຊັບ ກາຢາຟັດ[63] |
| ໂຢນາທານ[64] | ທິໂອຟີລັດ[65] | ຊີໂມນ ຄານເທຣັດ[66] | ມັດທາຍ[67] | ເອລີໂອນຽດ[68] | ເຢຊີຟັດ[69] | ອານາເນຍ[70] |
| ອິດຊະມາເອນ[71] | ໂຢເຊັບ ກາບີ 72 | ອັນນາ II [73] | ເຢຊູ[74] | ເຢຊູ[75] | ມັດທາຍ[76] | ຟານນີອັດ[77] |

**(2) 77 ຊົ່ວອາຍຸຄົນໃນລຳດັບເຊື້ອສານຂອງພຣະເຢຊູຜູ້ເປັນມະຫາປະໂຣຫິດ (ລູກາ 3:23-28)**

| | | | | | | |
|---|---|---|---|---|---|---|
| ພຣະເຢຊູ[1] | ໂຢເຊັບ[2] | ເຮລີ[3] | ມັດທາດ[4] | ເລວີ[5] | ເມລະຂີ[6] | ຢັນນາ[7] |
| ໂຢເຊັບ[8] | ມັດຕາເທຍ[9] | ອາໂມ[10] | ນາຮູມ[11] | ເອຊະລີ[12] | ນາຄາຍ13 | ມາອາດ[14] |
| ມັດຕາເທຍ[15] | ເຊເມອີນ[16] | ໂຢເຊັກ[17] | ໂຢດາ[18] | ໂຢຮານັນ[19] | ເຣສາ20 | ເຊຣຸບບາເບນ[21] |
| ເຊອານຕີເອນ[22] | ເນຣີ[23] | ເມລະຂີ[24] | ອັດດີ[25] | ໂກຊາມ[26] | ເອັນມາດາມ[27] | ເອຣະ[28] |
| ໂຢຊວຍ[29] | ເອລີເອເຊ[30] | ໂຢຣິມ[31] | ມັດທາດ[32] | ເລວີ[33] | ຊີເມໂອນ[34] | ຢູດາ[35] |
| ໂຢເຊັບ[36] | ໂຢນາມ[37] | ເອລີອາກີມ[38] | ເມເລອາ[39] | ເມັນນາ[40] | ມັດຕາທາ[41] | ນາທານ[42] |
| ດາວິດ[43] | ເຢຊີ[44] | ໂອເບັດ[45] | ໂບອາດ[46] | ສານໂມນ[47] | ນາໂຊນ[48] | ອຳມີນາດາບ[49] |
| ອັດມີນ[50] | ອານີ[51] | ເຮຊະໂຣນ[52] | ເປເຣັດ[53] | ຢູດາ[54] | ຢາໂຄບ[55] | ອີຊາກ[56] |
| ເຕຣາ[57] | ນາໂຮ[58] | ເສຣຸກ[59] | ເຣອູ[60] | ເປເລັກ[61] | ເອເບ[62] | ເຊລາ[63] |
| ກາຍນານ[64] | ອາກປັກຊາດ 65 | ເຊມ[66] | ໂນອາ[67] | ລາເມັກ[68] | ເມທູເສລາ[69] | ເອນົກ[70] |
| ຢາເຣັດ[71] | ມະຫາລາເລນ 72 | ເກນານ[73] | ເອໂນດ[74] | ເຊດ[75] | ອາດາມ[76] | ພຣະເຈົ້າ[77] |

**(3) ການຈັດການແຜນງານແຫ່ງການໄຖ່**

1) ພຣະເຢຊູຊົງເປັນມະຫາປະໂຣຫິດເປັນນິດຕາມແບບຢ່າງຂອງເມຄີເຊເດັກ

**ເຮັບເຣ 6:20** ທີ່ພຣະເຢຊູເຈົ້າຜູ້ຊົງນຳໜ້າ ໄດ້ສະເດັດເຂົ້າໄປກ່ອນແທນພວກເຮົາແລ້ວ ເພາະພຣະອົງໄດ້ຊົງກາຍເປັນພຣະມະຫາປະໂຣຫິດຕະຫຼອດໄປໃນລຳດັບດຽວກັບເມຄີເຊເດັກ

**ເພງສັນລະເສີນ 110:4** ພຣະເຈົ້າຢາເວສັນຍາໄວ້ຢ່າງເດັດດ່ຽວ ພຣະອົງຈະບໍ່ຄືນຄຳເປັນຈັກເທື່ອຄືວ່າ, "ເຈົ້າຈະໄດ້ເປັນປະໂຣຫິດສືບໆໄປຕາມແບບດຽວກັນກັບເມຄີເຊເດັກ

2) ມະຫາປະໂຣຫິດຈະເຮັດໜ້າທີ່ແທນຄົນອິດສະຣາເອນທັງໝົດ ແລະມີໜ້າທີ່ປຽບເໝືອນຕະກຽງທີ່ຕ້ອງສ່ອງໃຫ້ປະຊາຊົນເຫັນທາງທີ່ຖືກຕ້ອງໂດຍພຣະຄຣິດຂອງພຣະເຈົ້າ ແຕ່ມະຫາປະໂຣຫິດສ່ວນໃຫຍ່ບໍ່ໄດ້ເຮັດໜ້າທີ່ນີ້

**ລະບຽບພວກເລວີ 24:3-4** ທຸກວັນເວລາຄໍ່າ ອາໂຣນຕ້ອງໄດ້ຕະກຽງທີ່ທຳເຕັນບ່ອນຊຸມນຸມ ແລະຮັກສາໃຫ້ມັນຮຸ່ງຢູ່ຈົນເຖິງແຈ້ງ ຕໍ່ໜ້າພຣະເຈົ້າຢາເວທີ່ຢູ່ນອກຜ້າກັ້ງຕໍ່ໜ້າຂອງຫີບພັນທະສັນຍາ. ໃຫ້ພາກັນຍຶດຖືລະບຽບການນີ້ໄວ້ທຸກຍຸກທຸກສະໄໝສືບໄປ. 4.ອາໂຣນຈະຕ້ອງດູແລຮັກສາຕະກຽງເທິງຫຼັກທີ່ເຮັດດ້ວຍຄຳສົດ ແລະກວດເບິ່ງໃຫ້ຮຸ່ງແຈ້ງຢູ່ຢ່າງສະໝໍ່າສະເໝີ ຢູ່ຊ້ອງໜ້າພຣະເຈົ້າຢາເວ.

3) ມະຫາປະໂຣຫິດໃນສະໄໝຂອງພຣະເຢຊູນັ້ນຈະຕ້ອງເຮັດໜ້າທີເປັນພະຍານຢືນຢັນເຖິງພຣະເຢຊູຜູ້ຊົງເປັນມະຫາປະໂຣຫິດແທ້ແຕ່ພວກເຂົາກັບພາຄົນໄປຄຶງພຣະເຢຊູ

**ມັດທາຍ 16:21** ຕັ້ງແຕ່ນັ້ນມາ ພຣະເຢຊູເຈົ້າກໍເລີ່ມອະທິບາຍໃຫ້ພວກສາວົກຟັງ ໂດຍກ່າວວ່າ, "ເຮົາຈຳເປັນຕ້ອງໄປນະຄອນເຢຣູຊາເລັມ ແລະຕ້ອງຮັບຄວາມທົນທຸກທໍລະມານຢ່າງໜັກຈາກພວກເຖົ້າແກ່ ພວກຫົວໜ້າປະໂຣຫິດແລະພວກທຳມະຈານ, ເຮົາຈະຖືກຂ້າແຕ່ໃນວັນຖ້ວນສາມເຮົາຈະເປັນຄືນມາຈາກຕາຍສູ່ຊີວິດ."

**ມາຣະໂກ 15:10** ປີລາດຮູ້ດີວ່າ ການທີ່ພວກຫົວໜ້າປະໂຣຫິດ ນຳພຣະເຢຊູເຈົ້າມາມອບໃຫ້ແກ່ຕົນນັ້ນເພາະພວກເຂົາມີໃຈອິດສາ

**ມັດທາຍ 27:20** ພວກຫົວໜ້າປະໂຣຫິດກັບພວກເຖົ້າແກ່ໄດ້ຍຸຍົງປະຊາຊົນ ຂໍໃຫ້ປ່ອຍບາຣາບາ ແລະໃຫ້ປະຫານພຣະເຢຊູເຈົ້າ.

**ມັດທາຍ 27:41** ພວກຫົວໜ້າປະໂຣຫິດແລະພວກທຳມະຈານກັບພວກເຖົ້າແກ່ ກໍໄດ້ເວົ້າໝິ່ນປະໝາດພຣະອົງ

**ມັດທາຍ 15:14** ຢ່າສົນນຳພວກເຂົາເທາະ! ພວກເຂົາເປັນຄົນຕາບອດນຳຄົນຕາຍບອດແລະເມື່ອຄົນຕາບອດຈູງຄົນຕາບອດໄປ ເຂົາທັງສອງກໍຕົກລົງໃນຂຸມ

**ເພງສັນລະເສີນ 119:8** ຂໍຊົງໂຜດເປີດຕາຂອງຂ້ານ້ອຍ ເພື່ອຂ້ານອຍຈະໄດ້ເຫັນຄວາມຈິງອັນອັດສະຈັນຢູ່ໃນກົດບັນຍັດນັ້ນ.

**1 ໂກຣິນໂທ 2:10** ພຣະເຈົ້າໄດ້ເປີດເຜີຍຄວາມເລິກລັບຂອງພຣະອົງ ແກ່ພວກເຮົາໂດຍທາງພຣະວິນຍານ. ແທ້ຈິງແລ້ວ, ພຣະວິນຍານຢັ່ງຮູ້ທຸກສິ່ງ ເຖິງແມ່ນເປັນຄວາມເລິກລັບຂອງພຣະເຈົ້າ.

**ພຣະນິມິດ 10:2** ເພິ່ນຖືໜັງສືມ້ວນນ້ອຍທີ່ພີຢູ່ໃນມື, ເພິ່ນເອົາຕີນຂວາຢຽບນໍ້າທະເລ ແລະເອົາຕີນຊ້າຍຢຽບເທິງບົກ

**ພຣະນິມິດ 10:8-11** ແລ້ວສຽງທີ່ຂ້າພະເຈົ້າໄດ້ຍິນຈາກສະຫວັນນັ້ນກໍໄດ້ກ່າວແກ່ຂ້າພະເຈົ້າອີກວ່າ, "ຈົ່ງໄປຮັບ
ໜັງສືມ້ວນ ທີ່ພີຢູ່ໃນມືຂອງເທວະດາຕົນທີ່ຢືນຢູ່ເທິງທະເລແລະເທິງບົກນັ້ນ." [9]ຂ້າພະເຈົ້າຈຶ່ງໄປຫາເທວະດາຕົນ
ນັ້ນ ແລະຂໍເອົາໜັງສືມ້ວນນ້ອຍນັ້ນ. ເພິ່ນໄດ້ຕອບຂ້າພະເຈົ້າວ່າ, "ເອົາໄປກິນສາ ມັນຈະເຮັດໃຫ້ທ້ອງຂອງເຈົ້າຂົມ,
ແຕ່ໃນປາກຂອງເຈົ້າຂະຫວານດັ່ງນໍ້າເຜິ້ງ." [10]ຂ້າພະເຈົ້າໄດ້ຈັບເອົາໜັງສືມ້ວນນ້ອຍ ຈາກມືຂອງເທວະດາ ແລ້ວເອົາ
ມາກິນ ໃນປາກຂອງຂ້າພະເຈົ້າ ມັນກໍຫວານດັ່ງນໍ້າເຜິ້ງ ເມື່ອຂ້າພະເຈົ້າກິນລົງໄປແລ້ວ ທ້ອງຂອງຂ້າພະເຈົ້າກໍຂົມ.[11]
ແລ້ວຂ້າພະເຈົ້າກໍໄດ້ຮັບຄຳສັ່ງວ່າ, "ເຈົ້າຕ້ອງປະກາດຖ້ອຍຄຳຂອງພຣະເຈົ້າອີກເທື່ອໜຶ່ງ ກ່ຽວກັບບັນດາຊົນຊາດ
ທັງຫຼາຍ, ບັນດາປະຊາຊາດ, ພາສາ ແລະກະສັດທັງຫຼາຍ

Institution Centered on the Word of Redemptive History

# Berit Theological Seminary And Graduate School

Berit (בְּרִית) means *covenant* in Hebrew. We have been given the calling to the pass on the covenant of the history of redemption in this age. Our online courses are affordable and designed for the busy student who is in ministry. BTS provides world-class Christocentric, Redemptive-historical lectures for church leaders that are accessible anywhere in the world and at any time of day.

## *Our Campuses*

**Korea Campus** *Available languages: Korean, English, Chinese, Indonesian*

- **Website** e.berit.kr
- **Tel** +82-2-2678-6464
- **Fax** +82-2-2678-6446
- **WhatsApp/WeChat** +82-10-8695-0299
- **E-mail** berit6464@daum.net
- **Address** 5F, Huisun B/d, 159, Dangsan-ro, Yeongdeungpo-gu, Seoul, Republic of Korea

**US Campus** *Available Languages: English, Spanish*

- **Website (English)** berit.us
- **Website (Spanish)** berit.us/es/
- **Tel/WhatsApp (English)** +1-516-633-6271, **WhatsApp (Spanish)** +1-863-242-0779
- **Email** admin@berit.us
- **Facebook (English)** www.facebook.com/berittheologicalseminary
- **Facebook (Spanish)** www.facebook.com/seminariotheologicoberit
- **Address** 4156 E. Oglethorpe Hwy, Hinesville, 31313, Georgia, USA

* USA only

## *Online Programs*

*Study Anywhere Online at Affordable Costs*

**Korea e.berit.kr / USA berit.us**

| Program | | # of Years | Admission Requirements |
|---|---|---|---|
| Bachelor of Biblical Studies (B.B.S) | | 2 years | High school diploma |
| Master's | Biblical Studies (M.B.S) | 2 years | Bachelor's degree |
| | Divinity (M.Div) | 2 years (Korea)<br>3 years (USA) | |
| Doctoral | Biblical Studies (D.B.S) | 2 years | M.B.S or M.Div degree from Berit |
| | Ministry (D.Min) | | M.Div degree from Berit or the equivalent from other accredited institutions |
| Transfer to Ivy Christian College, USA | | Can Vary | For those who wish to obtain a Bachelor's degree |
| Transfer Courses for All Programs | | 1 year | Contact school |
| Certificate in Mastering Redemptive History NEW! | | 1 year | For those who wish to learn the history of redemption |

### Admission Requirements

1. Application form
2. Diploma or proof of the highest level of education
3. A Letter of Recommendation
4. Transcript (Relevant for transfer students)
5. Submission Method: E-mail, Fax, Mail, Online

# History of Redemption *(Heilsgeschichte)*, the Overarching Theme That Opens Up the Bible

The Bible was written for the salvation of mankind. When we view every narration in the 66 books of the Bible through the overarching theme of "God's history of salvation," our eyes will be opened to the God's profound will therein.



"The greatest tradition of the 2,000-year church history is biblical research and prayer. Rev. Park's ministry has been very faithful to this tradition. I'm very impressed with his ministry and I just delight in his emphasis on the Word of God. Basically, the History of Redemption series was good. I am very impressed with his knowedlge of the Bible and his sound theology.

The author's evangelical faith is shown through the series and should be required to be read by many pastors in America."

**Dr. Bruce K. Waltke**

- World-renowned Old Testament Scholar
- NASB, NIV Translation Committee Member
- Professor Emeritus, Regent College
- Professor Emeritus, Knox Theological Seminary
- Former Professor, Westminster Theological Seminary
- Former Professor, Dallas Theological Seminary



"Just as God trained Apostle Paul in Arabia for 3 years before He used him, God trained Rev. Abraham Park in Mt. Jiri for 3 years in order to use him throughout the world."

**Dr. Warren A. Gage**

- Professor Emeritus of Old Testament, Knox Theological Seminary



## Author's Profile

- Born in Sariwon, Hwanghe-do, Korea
- B.A. in Corporate Management from Kookmin University
- M.Div. from the Presbyterian General Assembly Theological Seminary
- Honorary D. Min. from Lael College and Graduate School
- Honorary D.D. from Faith Theological Seminary
- Honorary D.D. from Knox Theological Seminary
- Former Moderator of the Hap-dong Conservative General Assembly of the Presbyterian Church in Korea

"Dr. Abraham Park helps us to understand the Bible saying that when we follow the Word, we can obtain eternal life and shine brightly like the lamp. His books are the result of extraordinary studies of the Bible."



### Dr. Norman Manohar

- President of Faith Theological Seminary



### Dr. Frank A. James III

- Professor of Historical Theology
- President of Biblical Theological Seminary
- Former President of Reformed Theological Seminary

"One simply cannot overstate the importance of Genesis as the foundational paradigm for all Christian thinking. Dr. Abraham Park is to be congratulated for his important and worthy contribution to our understanding of this foundational book. He carefully considers the 10 genealogies of Genesis and employs these genealogies to reveal the core of God's work of redemption in history, which find their ultimate expression in the work of Jesus Christ.
Dr. Abraham Park's book is a journey worth taking. I heartily recommend this insightful work. Read it, study it, pray over it, and then put its wisdom into your life and ministry!"

# SINGAPORE

## HISTORY OF REDEMPTION SEMINAR